# ການລ້ຽງໄກ່ພື້ນເມືອງ



ໂດຍ: ອ.ຈ ວັນສີ ປະຖຸມມະວົງ

ຜູ້ລຽບລຽງ: ອ.ຈ ໄພໄຊ

# ການລ້ຽງໄກ່ພື້ນເມືອງ

1. **<u>ຂໍ້ຄວນຄຳນຶງໃນການລ້ຽງໄກ່ພື້ນເມືອງ.</u>**
   - 1.1 ພັນດີ.
   - 1.2 ອາຫານດີ
   - 1.3 ປ້ອງກັນດີ.
   - 1.4 ບໍລິການດີ.
   - 1.5 ຕະຫຼາດດີ

2. **<u>ສະຖານທີ່ລ້ຽງໄກ່.</u>**

ແຕ່ກ່ອນຊາວບ້ານເຄີຍລ້ຽງໄກ່ໂດຍເຮັດລົກໄກ່ໄວ້ກ້ອງຕະລ່າງ, ກ້ອງເລົ້າ ຫຼື ກ້ອງຮົ່ມໄມ້ ແຕ່ມັກຈະມີບັນຫາ ແລະ ບໍ່ໄດ້ຮັບຜົນດີ. ເມື່ອເຫັນວ່າເປັນແນວນັ້ນຈຶ່ງມີການປ່ຽນ, ໄປປຸກລົກໄກ່ຢູ່ໄກເຮືອນ, ລົກໄກ່ຄວນສ້າງຢູ່ບ່ອນດິນສູງນ້ຳບໍ່ຖ້ວມ, ມີແສງແດດສ່ອງ, ມີລົມພັດຜ່ານໄດ້ດີ, ມີນ້ຳ ແລະ ແຫຼ່ງອາຫານ, ໄກຊຸມຊົນ.

3. **<u>ລັກສະນະຂອງລົກໄກ່.</u>**




3.1 ສ້າງດ້ວຍວັດຖຸທີ່ຊອກໄດ້ງ່າຍໃນທ້ອງຖິ່ນ, ປະຢັດທຶນ, ທົນທານ.

3.2 ຫຼັງຄາມຸງດ້ວຍວັດສະດຸທີ່ຊອກໄດ້ງ່າຍໃນທ້ອງຖິ່ນ, ກັນຝົນ ກັນແດດໄດ້ເຊັ່ນ: ຫຍ້າຄາ, ຫຍ້າແຝກ, ຝາ.........

3.3 ມີປະຕູເຂົ້າ - ອອກສູງໃຫ້ຄົນເຂົ້າ - ອອກໄດ້ສະບາຍ ແລະ ຕ້ອງມີປະຕູນ້ອຍສຳລັບໄກ່ແລ່ນເຂົ້າ - ອອກ ຂະໜາດພໍດີກັບໄກ່ເຂົ້າ - ອອກໄດ້ເທື່ອລະໂຕ. ( ເພື່ອສະດວກໃນການນັບ ແລະ ກວດກາໄກ່ ).

3.4 ຝາຄອກໄກ່ແອ້ມດ້ວຍວັດສະດຸທີ່ຊອກໃນທ້ອງຖິ່ນໄດ້ງ່າຍເຊັ່ນ: ໄມ້ໄຜ່, ຝານັບແຕ່ພື້ນເຖິງແອວຄວນແອ້ມໃຫ້ຕຶບ ເພື່ອປ້ອງກັນລົມພັດ, ສ່ວນຝາແຕ່ພຽງແອວຂຶ້ນໄປເຖິງຫຼັງຄາຄວນແອ້ມຫ່າງ ເພື່ອໃຫ້ລົມພັດຜ່ານໄດ້, ແສງສະຫວ່າງກໍ່ສ່ອງໄດ້ບາງເວລາແຕ່ ສາມາດປ້ອງກັນສັດທີ່ເຂົ້າມາລົບກວນໄກ່ໄດ້ເຊັ່ນ: ງູ, ເຫງັນ, ໝາ .......

3.5 ມີຄອນໃຫ້ໄກ່ນອນຊຶ່ງເຮັດດ້ວຍໄມ້ໄຜ່ກົມຂະໜາດພໍດີກັບຕີນໄກ່ຈັບໄດ້, ຖ້າເຮັດຄອນຫຼາຍອັນຄວນໃຫ້ສູງລະດັບດຽວກັນ. ຖ້າເຮັດຄອນສູງຫຼາຍຄອນເຮັດຂັ້ນໄດໃຫ້ໄກ່ໄຕ່ນ້ອຍໄຕ່ຂຶ້ນໄດ້.

3.6 ມີຮອງໄຂ່ໄວ້ຄຽງຈ້ານອນແມ່ໄກ່, ຮອງໄກ່ສ່ວນຫຼາຍຈະເອົາກະຕ່າ ຫຼື ເອົາໄມ້ປ່ອງມາສານເປັນກະຕ່າ.

3.7 ໃນລົກໄກ່ຄວນຈັດໃຫ້ມີມຸມທີ່ເປັນລັກສະນະຫ້ອງນ້ອຍ ( ຫ້ອງນ້ອຍ ) ທີ່ສານດ້ວຍແຕະໜາຊຶ່ງຈັດໃຫ້ໄກ່ແມ່ລູກອ່ອນ ແລະ ລູກນອນ, ໄກ່ແມ່ລູກອ່ອນ ແລະ ລູກຈະນອນຢູ່ພື້ນດິນເຮົາຕ້ອງເອົາໃຈໃສ່ບໍ່ໃຫ້ສັດເຂົ້າລົບກວນ.

3.8 ພື້ນລົກໄກ່ຄວນເປັນດິນອັດແໜ້ນຍ້ອນສາມາດກວາດເອົາຂີ້ໄກ່ອອກມາເຮັດຝຸ່ນບົ່ມໄດ້ງ່າຍ, ບໍ່ຄວນຮອງດ້ວຍແກບ ເພາະແກບຈະຊຶ່ງເຂົ້າຕາໄກ່. ແກບມັກຈະເກີດໄຮໃນລົກໄກ່.

3.9 ບໍລິເວນໜ້າລົກໄກ່ຕ້ອງເປັນເດີ່ນຫລ້າງດິນອັດແໜ້ນ ເພື່ອເຮັດເປັນເດີ່ນໃຫ້ອາຫານ ແລະ ຄວນມີພາຊະນະໃສ່ອາຫານ.

3.10 ອ້ອມຮອບລົກໄກ່ບໍ່ຄວນມີຕົ້ນໄມ້ໃຫຍ່ຫຼາຍເພາະຈະເຮັດໃຫ້ມືດ, ລົມພັດຜ່ານບໍ່ສະດວກ.

3.11 ຕາມສາຍຄາລົກໄກ່ຕ້ອງມີຮ່ອງລະບາຍນ້ຳຝົນ ເພື່ອປ້ອງກັນບໍ່ໃຫ້ນ້ຳຝົນໄຫຼເຂົ້າລົກ, ຖ້າພື້ນລົກຊຸ່ມຈື້ນຈະມີສ່ວນໃຫ້ໄກ່ເປັນຫວັດໄດ້ງ່າຍ.

3.12 ທິດຂອງລົກໄກ່, ຖ້າເປັນລົກນ້ອຍຫັນໄປທິດໃດກໍ່ໄດ້, ແຕ່ຖ້າລົກໃຫຍ່ຄວນຫັນສີໜ້າໄປຕາມທາງຕາເວັນອອກ ຫຼື ຕົກກໍ່ໄດ້.

4. <u>ພັນໄກ່</u>

ໄກ່ພື້ນເມືອງ ( ໄກ່ລາດ ) ທຸກພັນຈະດີພໍດຶ່ງຈະເໝາະສົມກັບແຕ່ລະທ້ອງຖິ່ນທີ່ລ້ຽງ, ໄກ່ເຂດທາວກໍ່ເໝາະສົມກັບເຂດໜາວບໍ່ສົມຄວນທີ່ຈະລ້ຽງຢູ່ເຂດຮ້ອນ, ໄກ່ທີ່ງຽບບໍ່ສົມຄວນຈະເອົາໄປລ້ຽງຢູ່ເຂດພູດອຍ.

**ກ. <u>ລັກສະນະຂອງໄກ່ທີ່ດີ.</u>**

1. ແຂງແຮງດີ.
2. ຕາເກີນເກັ່ງ
3. ແມ່ພັນດີ. ( ຂະຫຍາຍພັນດີ, ໄຂ່ຫຼາຍ, ຟັກໄຂ່ເປັນ, ລູກຫຼາຍ )
4. ລ້ຽງລູກເກັ່ງ.
5. ກິນເກືອຍແຕ່ໃຫຍ່ໄວ.

ຂ. <u>ປະເພດໄກ່.</u>

1. ໄກ່ແຈ້ 4 - 4,5ເດືອນເລີ່ມໄຂ່.
2. ໄກ່ກາງ 5ເດືອນເລີ່ມໄຂ່.
3. ໄກ່ໃຫຍ່ 6ເດືອນເລີ່ມໄຂ່.

ຄ. <u>ລັກສະນະຂອງໄກ່.</u>

1. ໄກ່ເຂດໜາວເທິງພູດອຍເປັນໄກ່ພັນໃຫຍ່ມີຂົນດົກໜາ, ໂຕໃຫຍ່ ຫາກິນຕາມປ່າຕາມດົງກິນມົດ, ແມງ,ໄຂ, ປວກ, ບົ້ງ, ຂີ້ກະເດືອນ.
2. ໄກ່ເຂດຮ້ອນ - ທົ່ງພຽງ ເປັນໄກ່ພັນກາງຂົນໜ້ອຍ ( ຂົນບາງ ) ແຕ່ງຫາກິນພໍ ຫຼາຍ, ໄກ່ຈຳພວກນີ້ໄດ້ຮັບການພັດທະນາຈາກໄກ່ປ່າມາເປັນໄກ່ບ້ານ.
3. ໄກ່ແຖວຊາຍປ່າ ພັນໄກ່ແຈ້ ( ບ້ານນາແຄມໂຄກ ຫຼື ປ່ານ້ອຍ ) ໂຕນ້ອຍ, ຈ່ອຍ, ຮຽວ ເຊັ່ນ: ໄກ່ແຈ້.

   ການເລືອກພັນໄກ່ມາລ້ຽງນັ້ນສຸດແລ້ວແຕ່ຄວາມເໝາະສົມ, ແຕ່ຕ້ອງເລືອກພັນໃຫ້ເໝາະສົມກັບສະພາບແວດລ້ອມ ແລະ ທ້ອງຖິ່ນນັ້ນເອງ.

5. <u>ການກຽມສະຖານທີ່ກ່ອນເອົາໄກ່ມາລ້ຽງ.</u>

5.1 ຕ້ອງຊື້ໄກ່ຢູ່ບ່ອນບໍ່ມີພະຍາດລະບາດໃນບ້ານນັ້ນມາກ່ອນ.

5.2 ຊື້ໄກ່ພໍ່ພັນແມ່ພັນຄວນມາຈາກຕ່າງຖິ່ນຕ່າງໝູ່ບ້ານກັນເພື່ອຈະໄດ້ລູກໄກ່ທີ່ດີ, ຖ້າພໍ່ພັນແມ່ພັນມາຈາກສາຍເລືອດໃກ້ຊິດກັນຈະໄດ້ລູກໄກ່ທີ່ອ່ອນແອ.

5.3 ກ່ອນນຳໄກ່ເຂົ້າມາລ້ຽງຕ້ອງກຽມລົກໄກ່ໃຫ້ສະອາດ, ນ້ຳທີ່ໃຫ້ໄກ່ກິນຄວນປະສົມນ້ຳສະກັດຊີວະພາບເຄືອເຂົາຮໍ່ອັດຕາສ່ວນ 1ບ່ວງແກງຕໍ່ນ້ຳ 10ລິດ ໃຫ້ໄກ່ກິນນ້ຳກ່ອນ 1ຊົ່ວໂມງຈາກນັ້ນຈຶ່ງໃຫ້ອາຫານ.

6. <u>ການລ້ຽງໄກ່ນ້ອຍ.</u>

ຫຼັງຈາກໄກ່ເບາະອອກຈາກໄຂ່ໄດ້ 24ຊົ່ວໂມງແລ້ວຈຶ່ງໃຫ້ກິນອາຫານ, ຖ້າເອົາທານໃຫ້ກິນອາຫານໂລດ, ໄກ່ນ້ອຍອາດຈະເຈັບທ້ອງ. ບໍລິເວນລ້ຽງໄກ່ນ້ອຍຄວນແຍກອອກຕ່າງຫາກ.

<u>ການລ້ຽງໄກ່ນ້ອຍ 2ວິທີ</u>

1. ໃຫ້ແມ່ໄກ່ລ້ຽງ.
2. ແຍກເອົາໄກ່ນ້ອຍໄປລ້ຽງຕ່າງຫາກ.

ການໃຫ້ແມ່ໄກ່ລ້ຽງເອງບໍ່ເປັນພາລະຕໍ່ຜູ້ລ້ຽງ, ແຕ່ຈຳນວນເທື່ອການໄຂ່ຂອງແມ່ໄກ່ ຈະບໍ່ມີຫຼາຍຕໍ່ປີ, ຖ້າເຮົາແຍກໄກ່ນ້ອຍລ້ຽງຕ່າງຫາກຈະເພີ່ມວຽກໃຫ້ແກ່ຜູ້ລ້ຽງແຕ່ແມ່ໄກ່ຈະ ອອກໄຂ່ໄດ້ຫຼາຍເທື່ອຕໍ່ປີ

6.1 ການໃຫ້ແມ່ໄກ່ລ້ຽງເອງສຸ່ມໄກ່ແມ່ລູກອ່ອນຕ້ອງເຮັດ:




ສຳລັບໄກ່ນ້ອຍສຳລັບເອົາໄວ້ນອກສຸ່ມ

ຖ້າໄກ່ເບາະ 3 - 4ແມ່ຂຶ້ນໄປ




ຢ່າລືມນ້ຳໃຫ້ໄກ່ກິນທັງໃສ່ນ້ຳສະກັດຊີວະພາບເຄືອເຂົາຮໍ່ຕາມອັດຕາສ່ວນຂ້າງເທິງ.

- <u>ເຕົາອົບໄກ່ນ້ອຍ ( ເຕົາໄຟຟ້າ )</u>

ລະດູໜາວຄວນມີເຕົາອົບໄກ່ນ້ອຍຊ່ວຍ

ກະປ໋ອງນົມຝຸ່ນ




ນອກນັ້ນຍັງມີ




**<u>ການສັງເກດຄວາມເໝາະສົມອຸ່ນນະພູມຂອງການອົບຂອງໄກ່ນ້ອຍ</u>**

- ຖ້າໄກ່ນ້ອຍເຂົ້າໄປໃກ້ເຕົາສະແດງວ່າໄຟອ່ອນຕ້ອງໄຂຮູອາກາດເພີ້ມ.
- ຖ້າໄກ່ນ້ອຍຢູ່ກະແຈກກະຈາຍທົ່ວໄປສະແດງວ່າຄວາມຮ້ອນພໍດີ.
- ຖ້າໄກ່ນ້ອຍຢູ່ໄກ້ເຕົາອົບສະແດງວ່າຮ້ອນເກີນໄປຄວນປິດຮູລະບາຍຄວາມຮ້ອນບາງຮູໄວ້.



**ພາຊະນະໃສ່ອາຫານໄກ່ນ້ອຍ:**

ບັ້ງໄມ້ໄຜ່, ໄມ້ພາງ .... ( ຂະໜາດບໍ່ໃຫ້ໃຫຍ່ )




**ພາຊະນະໃສ່ອາຫານໃຫ້ໄກ່ນ້ອຍ:**

ບັ້ງໄມ້ໄຜ່ . . . . . . . .




ເມື່ອໄກ່ນ້ອຍແຂງແຮງ ( ອາຍຸປະມານ 7ວັນ ) ກໍ່ປ່ອຍໃຫ້ແມ່ໄກ່ພາລູກໄປຊອກກິນເອງ, ຕໍ່ມາເມື່ອໄກ່ນ້ອຍອາຍຸ 1ເດືອນ ຄວນແຍກແມ່ ແລະ ລູກຈັບແມ່ໄກ່ໃສ່ສຸ່ມໃຫ້ໄກ່ນ້ອຍໄປຊອກກິນເອງ, ໄກ່ນ້ອຍໄປຊອກກິນ 2 - 3ວັນກໍຈະລືມແມ່, ແມ່ໄກ່ເລີ່ມປະສົມພັນ ແລະ ອອກໄຂ່ຮຸ່ນຕໍ່ໄປ ( ຖ້າເອົາໄກ່ຜູ້ຂັງໃສ່ນຳຍິ່ງເປັນການດີ ).

6.2 **ການລ້ຽງລູກໄກ່ເອງ.**

1. ທຳຄວາມສະອາດລົກໄກ່ດ້ວຍການສີດພົ່ນນ້ຳສະກັດຊີວະພາບລ່ວງໜ້າ 2 – 3ວັນ.
2. ກຽມເຄື່ອງອົບໄກ່ໄວ້ກ່ອນ 1ຊົ່ວໂມງ.
3. ເຮັດຮົ້ວອ້ອມເພື່ອບໍ່ໃຫ້ໄກ່ນ້ອຍອອກໄກເຄື່ອງອົບ, ພໍດີກັບຈຳນວນໄກ່.
4. ເອົາໄກ່ນ້ອຍທີ່ເປາະແລ້ວ 1ວັນມາຢູ່ໃນຮົ້ວຂອງເຄື່ອງອົບ.
5. ສອນໄກ່ນ້ອຍກິນນ້ຳເທື່ອລະໂຕ ( ຄ່ອຍຄົ້ມຫົວລົງ ).

6. ເອົາແຜ່ນເຈ້ຍ ຫຼື ສັງກະສີຮອງອາຫານແລ້ວໃຫ້ໄກ່ນ້ອຍສັບມີສຽງດັງໂຕອື່ນກໍຈະມາກິນ ຄືກັນ.

7. ຜູ້ລ້ຽງຕ້ອງສັງເກດເຄື່ອງອົບເລື້ອຍໆເພື່ອໃຫ້ໄກ່ນ້ອຍມີຄວາມອົບອຸ່ນເໝືອນກັບຢູ່ນຳແມ່ຂອງມັນ.

<u>ອາຫານຂອງໄກ່ນ້ອຍ:</u>

1. ປົ້ງ, ແມງໄມ້, ປວກທີ່ຕາຍແລ້ວ, ຕັກແຕນ ( ອາຫານປະເພດຊີ້ນ )............
2. ເຂົ້າປຽນ ( ເຂົ້າປາຍ ) ໝາກຫຍ້າ ( ອາຫານປະເພດແປ້ງ )....................
3. ຜັກສົດ, ຫຍ້າສົດ, ໝາກໄມ້ສຸກ ( ອາຫານປະເພດວິຕາມິນ )..................
4. ຖ້າໃຫ້ອາຫານສຳເລັດຄວນລົດລົງເລື້ອຍໆເພື່ອສອນໃຫ້ໄກ່ໄດ້ຊອກກິນເອງ.

8. ກ່ອນປ່ອຍໄກ່ 7ມື້ໃຫ້ສອນໄກ່ອອກຊອກຫາກິນ ຄ່ອຍຫຍັບອາຫານ ແລະ ນຳອອກໄກ ຈາກບ່ອນເກົ່າ ແລະ ຄ່ອຍຫວ່ານອາຫານລົງພື້ນດິນ ຫຼື ໃບປາຫຍ້າ.

* <u>ໄກ່ແບ່ງອອກເປັນ 3ຮຸ່ນ</u> *

1. <u>ໄກ່ນ້ອຍ:</u> ຄືໄກ່ເລີ່ມແຕກຈາກປີ້ 1,5ເດືອນ ( 45ວັນ ).
2. <u>ໄກ່ຮຸ່ນ:</u> ຄືໄກ່ທີ່ມີອາຍຸ1,5ເດືອນ ( 45ວັນ ) – 4ເດືອນ ( 120ວັນ ).
3. <u>ໄກ່ໃຫຍ່:</u> ຄືໄກ່ທີ່ມີອາຍຸ 4ເດືອນຂຶ້ນໄປ.

7. <u>ເວລາໃຫ້ອາຫານໄກ່ ( ເກືອໄກ່ ).</u>

7.1 ເກືອໄກ່ຕອນແລງ, ຕອນເຊົ້າໃຫ້ໄກ່ໄປຊອກກິນເອງ, ຖ້າເຮົາເກືອໄກ່ຕອນເຊົ້າຈະເປັນນິໄສບໍ່ດີໃຫ້ໄກ່, ໄກ່ຈະວົນວຽນຢູ່ອ້ອມແອ້ມເຮືອນບໍ່ໄປຊອກຫາກິນເອງຖ້າກິນນຳແຕ່ເຈົ້າຂອງ.

7.2 ເວລາປ່ອຍໄກ່ຕອນເຊົ້າຜູ້ລ້ຽງຕ້ອງນັບຈຳນວນເພາະໄກ່ອອກເທື່ອລະໂຕ. ( ເປັນການກວດກາເພື່ອຕິດຕາມສະພາບການເສຍ, ເຈັບ, ຕາຍຂອງໄກ່ ).

7.3 ການເກືອໄກ່ຕອນແລງແມ່ນການເຝິກແອບບໍ່ໃຫ້ໄກ່ໄປຫາກິນໄກຫຼາຍ, ຕ້າຍຄ່ຳແລ້ວໄກ່ຈະຟ້າວກັບເພາະຢ້ານບໍ່ທັນກິນອາຫານນຳໝູ່.

7.4 ຜູ້ລ້ຽງຕ້ອງສັງເກດວ່າ: ຖ້າໝູ່ໄກ່ໃຫຍ່ຈຶ່ງແມ່ນໄກ່ອີ່ມແລ້ວຖ້າໄກ່ກິນບໍ່ອີ່ມໃຫ້ເກືອເພີ່ມ ແລະ ກວດເບິ່ງແຫຼ່ງອາຫານ.

## 8. ແຫຼ່ງອາຫານໄກ່.

ຕາມທຳມະຊາດ,ທົ່ງນາ, ສວນ, ປ່າ . . . . . ຕ້ອງສ້າງເງື່ອນໄຂໃຫ້ມີອາຫານຂອງໄກ່ພຽງພໍ ດ້ວຍການບໍ່ຖາງປ່າ, ບໍ່ຈູດປ່າ, ປູກພືດທີ່ຄົນກິນໄດ້ ແລະ ກິນບໍ່ໄດ້, ອາຫານຈຳພວກແປ້ງເຊັ່ນ: ສາລີ, ມັນ, ເຜືອກ ຄວນປູກໄວ້ເພື່ອໃຫ້ໄກ່ໄດ້ຊອກກິນໄດ້, ຕາມປ່ານ້ອຍແຄມນາຄວນຖາງເປັນທາງຈັ່ງ ເພື່ອໃຫ້ໄກ່ຫາກິນສະດວກ ໝາຍວ່າໃຊ້ທຳມະຊາດໃຫ້ເປັນປະໂຫຍດ.

ສິ່ງສຳຄັນນ້ຳຕ້ອງມີບໍ່ຂາດຢູ່ຕາມຈຸດທີ່ຕ້ອງການໃຫ້ໄກ່ໄປຊອກກິນ, ເວົ້າລວມແລ້ວຖ້າລ້ຽງໄກ່ພື້ນເມືອງຕ້ອງເບິ່ງສະຖານທີ່ລ້ຽງ 10ຕາແມັດຕໍ່ໄກ່ 1ໂຕເທົ່ານີ້ກໍພໍແລ້ວ.

## 9. ການຟັກໄຂ່.

ການຟັກໄຂ່ຖ້າປະຕິບັດຖືກຕ້ອງຈະຂະຫຍາຍພັນໄກ່ໄດ້ຫຼາຍ, ຖ້າເປັນໄປໄດ້ຄວນໃຫ້ແມ່ໄກ່ຟັກໄຂ່ພ້ອມກັນ 4 - 5ແມ່ເຮົາຈະເສຍເວລາດູແລພຽງຄັ້ງດຽວໄດ້ໄກ່ນ້ອຍເກືອບ 50 - 60ໂຕ ເຮັດໃຫ້ກຸ້ມຄ່າຂອງການເຮັດວຽກ.

9.1 ຮອກໄຂ່ ( ຮັງໄຂ່ ) ໃຊ້ກະຕ່າໄມ້ມັດຕິດແໜ້ນ, ຮອງດ້ວຍເສດຜ້ານຸ້ມບໍ່ໃຫ້ເປັນບ່ອນຫຼຸບໄຂ່ຈະແຕກງ່າຍ, ຖ້າແບນໂພດກໍຈະເຮັດໃຫ້ໄຂ່ກິ້ງອອກ, ຖ້າຮອງດ້ວຍຫຍ້າເຟືອງຈະເກີດໄຮ, ປາກຮອກໄກ່ເອົາຜ້າເສດພັນໃສ່ເພື່ອເຊັດຕີນໄກ່ກ່ອນເຂົ້າຟັກໄຂ່ ແກ້ອອກທຳຄວາມສະອາດໄດ້.

9.2 ເຕັກນິກການຟັກໄຂ່ໄກ່ເພື່ອໃຫ້ໄດ້ລູກໄກ່ອອກເທື່ອລະຫຼາຍພ້ອມກັນ.



9.2/1. ເກັບໄຂ່ທຸກວັນໝາຍດ້ວຍສໍ ບອກຊື່ແມ່ໄກ່, ວັນ, ເດືອນ, ປີ.

9.2/2. ເອົາໄຂ່ວາງໄວ້ບ່ອນອ່ອນນຸ້ມ, ລົມພັດຜ່ານໄດ້, ບໍ່ປົກປິດ ແລະ ພິກມື້ລະເທື່ອທຸກວັນ.

9.2/3. ເອົາວັດຖຸຄ້າຍຄືໄຂ່ໄປວາງໃສ່ແທນໃນຮອກໄຂ່.

9.2/4. ຖ້າມີແມ່ໄກ່ໂຕໃດຟັກກ່ອນໃຫ້ຟັກໄຂ່ບ່ອນຖ້າ, ຖ້າມີຮອດ 4 - 5ແມ່ແລ້ວຈຶ່ງໃຫ້ມັນຟັກພ້ອມກັນ.

9.2/5. ໄກ່ແມ່ໜຶ່ງຈະຟັກ 10 -15ໜ່ວຍ, ຟັກ 21ວັນຈະເປາະ, ຖ້າກາຍ 23ວັນໄກ່ນ້ອຍຈະບໍ່ສົມບູນ.

9.2/6. ຖ້າເປືອກໄຂ່ບາງສະແດງວ່າແມ່ໄກ່ຂາດທາດແຄລຊຽມ, ຄວນຊອກເປືອກຫອຍ, ປູ ບົດລະອຽດໃຫ້ກິນ.

9.2/7. ຖ້າແມ່ໄກ່ໂຕໃດກິນໄຂ່ຕົນເອງສະແດງວ່າເປັນໂລກປະສາດ ຫຼື ຂາດທາດຊີ້ນ ຫຼື ບ່ອນຟັກໄຂ່ຮ້ອນເກີນໄປ.

9.2/8. ເວລາແມ່ໄກ່ພວມຟັກໄຂ່ໃຫ້ຕຽມ ເຂົ້າອາຫານໄວ້ໃຫ້ແມ່ໄກ່ໃກ້ໆຮັງຟັກໄຂ່.

9.2/9. ແມ່ໄກ່ຟັກໄຂ່ຈະພິກໄຂ່ເອງຕາມທຳມະຊາດ.

10. <u>ພໍ່ແມ່ພັນໄກ່.</u>

<u>ພໍ່ພັນທີ່ດີ:</u>

1. ພໍ່ພັນ 1ໂຕຕໍ່ແມ່ພັນໄກ່ 10ໂຕ ແຕ່ດີທີ່ສຸດ 5 – 8ໂຕ ແລະ ບໍ່ຢູ່ນຳໄກ່ແມ່ໂຕດຽວ.
2. ພໍ່ພັນເຮັດວຽກໄດ້ 1ປີ ຄວນຊອກພໍ່ພັນໃໝ່ມາປ່ຽນ.
3. ບໍ່ເປັນພະຍາດຂີ້ຂາວ.

<u>ແມ່ພັນທີ່ດີ:</u>

1. ເວລາພົບອາຫານແລ້ວຈະຈິກອາຫານຮ້ອງລູກມາກິນ.
2. ເວລາຂວັດເຂ່ຍອາຫານຈະບໍ່ຂວັດດິນ, ຂີ້ເຫຍື້ອໃສ່ລູກ.
3. ເວລາເຈົ້າຂອງມາເກືອຈະຮ້ອງລູກມາກິນພ້ອມກັນ.
4. ສາມາດພືປີກປ້ອງກັນ ( ຕູ້ມ ) ລູກໄດ້ໝາຍວ່າປີກໃຫຍ່ກວ້າງ.
5. ບໍ່ມີປະຫວັດເປັນໂລກຂີ້ຂາວ.

11. <u>ການປ້ອງກັນພະຍາດ.</u>

11.1 ປັດກວາດລົກໄກ່ໃຫ້ສະອາດມື້ລະເທື່ອ, ສີດພົ່ນນ້ຳສະກັດຂ້າເຊື້ອພະຍາດໄລ່ແມງ ນ້ຳ 1ລິດຕໍ່ນ້ຳສະກັດຂ້າເຊື້ອພະຍາດ ແລະ ນ້ຳຢາສູບແບວລະ 1ບ່ວງແກງ, ສີດພົ່ນ, ພື້ນ, ຝາ, ເພດານ, ຕູ້ງຄາດ້ານໃນ, ອ້ອມຂ້າງລົກໄກ່, ເດີ່ນບ່ອນເກືອໄກ່.

11.2 ຂີ້ໄກ່ອອກຈາກເລົ້າທຸກເຊົ້າເພື່ອເອົາມາເຮັດຝຸ່ນບົ່ມ, ຖ້າເຫັນວ່າມີໄຮໃຫ້ເອົານ້ຳປະສົມຢາລູບສີດພື້ນ.

11.3 ນ້ຳດື່ມຂອງໄກ່ໃຫ້ປະສົມນ້ຳໝັກຊີວະພາບເຈືອເຂົ້າຈໍທຸກວັນ.

11.4 ໃຫ້ໄກ່ອາບນ້ຳ ( ໃຫ້ໄກ່ເກືອກຝຸ່ນ ): ຈັດບໍລິເວນອາບນ້ຳຕ່າງຫາກນ້ຳທີ່ຈະອາບໃຫ້ໄກ່ມີສ່ວນປະສົມດັ່ງນີ້:

1. ຝຸ່ນຂາວ 1ສ່ວນ.
2. ຂີ້ເທົ່າ 1ສ່ວນ.
3. ຊາຍ 10ສ່ວນ.

ທັງສາມຢ່າງນີ້ປະສົມກັນໄວ້ອ່າງ ຫຼື ຂຸມ ເພື່ອໃຫ້ໄກ່ໄປນອນເກືອກເອົາຈະເຮັດໃຫ້ໄຮ ແລະ ເຫົາອອກໜີ.

## 12. <u>ໂລກທີ່ເຄີຍເກີດກັບໄກ່.</u>

### 12.1 <u>ພະຍາດເສັ້ນດ້າຍ:</u>

ອາການຕາ: ໄກ່ມີນ້ຳຕາໄຫຼຕາປຸກ ຊຶ່ງເກີດຈາກແມງສາບເປັນໂຕນຳພະຍາດ ແລະ ຂີ້ຝຸ່ນເຂົ້າຕາ, ວິທີຮັກສາໃຫ້ເຊັດຕາໄກ່ດ້ວຍນ້ຳອຸ່ນ ຫຼື ໃສ່ນ້ຳມັນດິບ, ອະນາໄມເລົ້າໄກ່ທຸກວັນ, ແຍກໄກ່ໂຕທີ່ເປັນພະຍາດນັ້ນໄວ້ຕ່າງຫາກ.

### 12.2 <u>ພະຍາດລຳໄສ້:</u>

ໄກ່ຄວນມີການຖ່າຍທ້ອງຈາກສະໝຸນໄພຊຶ່ງປະກອບດ້ວຍ:

ກ. ແກ່ນໝາກຕ້ຽວ 1ໜ່ວຍຝັກເປັນຊິ້ນນ້ອຍໆໃຫ້ໄກ່ກິນໆໄດ້ 5ໂຕໃຫ້ກິນທຸກເດືອນ.

ຂ. ແກ່ນໝາກກະຖິນແຫ້ງ 1ບ່ວງກາເຟປະສົມອາຫານໃຫ້ໄກ່ກິນ 1ໂຕເດືອນລະເທື່ອ.

### 12.3 <u>ນິວຄາເຊີນ:</u>

ອາການຂີ້ຂຽວ, ເຫງົາ, ຄໍບິດ, ປ້ອງກັນດ້ວຍວິທີໃຊ້ຢາວັກຊິນປ້ອງກັນຊຶ່ງມີຫຼາຍຊະນິດຄື: ຊະນິດຢອດດັງ, ຕາ, ຊະນິດສັກ, ຊະນິດລະລາຍນ້ຳໃສ່ອາຫານໃຫ້ໄກ່ກິນ, ວັກຊິນສຳລັບໄກ່ລຸ່ນຂຶ້ນໄປເອີ້ນວ່າ ວັກຊິນເຊື້ອເປັນ ຫຼື ເຊື້ອແກ່. ວັກຊິນສຳລັບໄກ່ນ້ອຍເອີ້ນວ່າວັກຊິນເຊື້ອຕາຍ ຫຼື ເຊື້ອອ່ອນ.

**<u>ວິທີໃຊ້:</u>** ໄກ່ນ້ອຍອາຍຸ 1 - 7ວັນ ໃຊ້ວັກຊີນເຊື້ອອ່ອນ, ໄກ່ອາຍຸເດືອນເຄິ່ງໃຊ້ວັກຊີນປ້ອງກັນນິວຄາເຊີນເຊື້ອແກ່ ຫຼັງຈາກໃຊ້ຄັ້ງທຳອິດແລ້ວຕໍ່ໄປອີກທຸກໆ 6ເດືອນ ຫຼື 1ປີຈຶ່ງໃຊ້ອີກ.

<u>ວິທີປຸງ:</u>

1. ນຳເອົາວັກຊີນທີ່ຊື້ມານັ້ນເກັບໄວ້ໃນກະຕິກນ້ຳກ້ອນ.
2. ເວລາຢອດໃຫ້ທຳຄວາມສະອາດອຸປະກອນໂດຍການຕົ້ມໃຫ້ຮ້ອນປະໄວ້ໃຫ້ເຢັນແລ້ວຈຶ່ງໃຊ້.
3. ຫ້າມໃຊ້ກັບຝູງໄກ່ທີ່ກຳລັງເຈັບປ່ວຍ.
4. ຢາທີ່ປະສົມແລ້ວໃຫ້ຮີບໃຊ້ພາຍໃນ 1ຊົ່ວໂມງ.
5. ອຸປະກອນເມື່ອໃຊ້ແລ້ວໃຫ້ທຳລາຍໂດຍເຜົາຖິ້ມ.

### <u>ສະໝຸນໄພທີ່ໃຊ້ປ້ອງກັນ ແລະ ປົວນິວຄາເຊີນ.</u>

ນອກຈາກນ້ຳສະກັດຊີວະພາບເຄືອເຂົາຮໍປະສົມນ້ຳໃຫ້ໄກ່ກິນທຸກວັນແລ້ວ ຍັງມີສະໝຸນໄພຊະນິດອື່ນທີ່ຊອກຫາງ່າຍຄື:

1. ເຄືອເຂົາຮໍ 1 ຂ້ຳມື.
2. ເຄືອຜັກຂະ 1 ຂ້ຳມື.
3. ຕົ້ນລາຊາບີ 1 ຂ້ຳມື.
4. ຂິມກະເດົາ 1 ຂ້ຳມື

ນຳເອົາທຸກຢ່າງມາຕຳ, ບີບເອົາແຕ່ນ້ຳ ປ້ອນເຂົ້າປາກໄກ່. ອັດຕາສ່ວນນີ້ໃຫ້ໄກ່ກິນໄດ້ນຶ່ງໂຕ, ໃຫ້ໄກ່ກິນທຸກວັນຈົນກວ່າຈະເຊົາ ແລະຢ່າລືມແຍກໄກ່ທີ່ເປັນພະຍາດໄວ້ຕ່າງຫາກ.

## 12.4 <u>ອະຫິວາ:</u>

ອາການຂີ້ຂາວເປັນນ້ຳ ເວລາໄກ່ຕາຍຕີນຕົວຈະຊຸ່ງ, ສ່ວນຫຼາຍຕົກຄອນຕາຍໃນລົກ, ສາເຫດເກີດຈາກໄກ່ກິນຂອງເປື້ອນຈາກກ້ອງຕາລາງ ແລະ ຂີ້ສີກ, ເພື່ອບໍ່ຢາກໃຫ້ພະຍາດນີ້ເກີດຂື້ນກັບໄກ່ ຕ້ອງໃຫ້ໄກ່ກິນນ້ຳປະສົມນ້ຳສະກັດຊີວະພາບເຄືອເຂົາຮໍທຸກວັນ ແລະ ສານແຕະປົກຊຸມນ້ຳເປື້ອນບໍ່ໃຫ້ໄກ່ລົງໄປກິນນ້ຳນັ້ນ.

ການປົວອະຫິວາ ໃຫ້ເອົາຢາ ເພນນີຊີລິນ ( ໜຶ່ງລ້ານມີລີກຼາມ ) ປະສົມນ້ຳກັ່ນສັກໄດ້ 100ເຂັມ, ສັກບ່ອນກ້າມຊີ້ນ. ສັກ 3ວັນຕິດຕໍ່ກັນ, ຈາກນັ້ນ 20ວັນກໍ່ສັກຢາປ້ອງກັນອະຫິວາໄກ່ອີກເທື່ອໜຶ່ງ.

## 12.5. ຝີດາດ




ພະຍາດນີ້ເກີດຂື້ນກັບໄກ່ນ້ອຍ ເປັນຕຸ່ມຕາມໜ້າ ແລະ ຕີນ, ພະຍາດນີ້ ປ້ອງກັນໄດ້ດ້ວຍການສັກຢາປ້ອງກັນ ( ຢາປ້ອງກັນຝີດາດ ) ຖ້າບໍ່ມີເຂັມສັກຢາ ໃຫ້ເອົາເຂັມຈັກຫຍິບເຄື່ອງ 2ດວງ ມັດໃສ່ ໄມ້ຕົ້ມນໍ້າຮ້ອນກ່ອນໃຊ້ ຈຸ່ມນໍ້າຢາແທງ ໜັງບາງໆຂອງປີກໄກ່ແຕ່ຢ່າໃຫ້ຖືກເສັ້ນ ເລືອດ, ຫຼັງຈາກນັ້ນໜຶ່ງອາທິດຈະເກີດຕຸ່ມ ໜອງສະແດງວ່າໄດ້ຜົນ

**<u>ຖ້າໄກ່ເປັນໂລກຝີດາດຈະຕ້ອງຮັກສາດື:</u>**

1. ເອົາເຫຼັກເຜົາໄຟຈີ່ບແດງຈີ້ຕຸ່ມນັ້ນ, ຖ້າຈີ້ໝົດທຸກຕຸ່ມໄກ່ຈະອົດບໍ່ໄດ້, ໃຫ້ຈີ້ ປະມານ 1/3 ( ໜຶ່ງສ່ວນສາມ ) ຂອງຕຸ່ມທັງໝົດທີ່ມີຢູ່ແລ້ວທາດ້ວຍຢາແດງ.
2. ເອົານໍ້າໃບຫຍ້າເກັດງູວຍ່ອງທາ.
3. ປາດຕຸ່ມແລ້ວທາດ້ວຍຫຍ້າເກັດງູວ.
4. ປາດຕຸ່ມແລ້ວທາດ້ວຍນໍ້າປູນໃສປະສົມຂີ້ໝິ້ນ.

**<u>ການຮັກໄກ່ເປັນພະຍາດໂດຍທົ່ວໄປ</u>**

1. ໄກ່ເປັນຫວັດເນື່ອງຈາກຄວາມອົບອຸ່ນບໍ່ພຽງພໍ, ອາກາດປ່ຽນແປງ ຫຼື ໄກ່ຕາກຝົນ, ລົກໄກ່ມີລົມໜາວພັດຜ່ານ, ພື້ນລົກປຽກຈື້ນ, ອາກາດໜາວ ຂໍ້ແກ້ໄຂຄື: ປັບປຸງລົກໄກ່ ແລະໃຫ້ໄກ່ກິນນໍ້າປະສົມນໍ້າສະກັດຊີວະພາບເຄືອເຂົາຮໍ ຫຼື ລາຊາບີ.
2. ໄກ່ເຈັບທ້ອງ ໃຫ້ໄກ່ກິນຍອດໃບສີດາ ຫຼື ຍອດຂີ້ເຫຼັກ 2 - 3 ຍອດ ປະສົມ ມົດສົມ 2 - 3ໂຕ.
3. ໄກ່ຂີ້ເປັນເລືອດໃຫ້ໄກ່ກິນເຂົ້າປຽກ ປະສົມກັບຖ່ານໄຟລະອຽດ.

<u>ໝາຍເຫດ:</u> **ຫ້າມນໍາສັດປ່ອຍເຂົ້າມາໃນບ່ອນລ້ຽງໄກ່.**

## 13. ການຕະຫຼາດ.

ການຈຳໜ່າຍໄກ່ເປັນເລື່ອງສຳຄັນ ຖ້າລ້ຽງຈຳໜ່າຍ ປະຊາຊົນທົ່ວໄປລ້ຽງໄກ່ພື້ນເມືອງມີ 3ປະເພດໃຫຍ່ດັ່ງນີ້:

1. ລ້ຽງໄວ້ເບິ່ງຫຼິ້ນ ຫຼື ເອົາໄວ້ເປັນອາຫານພາຍໃນຄອບຄົວ.
2. ລ້ຽງໄວ້ຫຼາຍແລ້ວຈຶ່ງຂາຍເທື່ອດຽວເພື່ອຈະໄດ້ເງິນເປັນກ້ອນ.
3. ລ້ຽງແລ້ວແຍກອອກຂາຍເທື່ອລະໜ້ອຍ ສ່ວນຫຼາຍເປັນໄກ່ຮຸ່ນ ຫຼື ໄກ່ຊອບຍ່າວຊຸມ ສາວ.

ປະເພດທີ່ 2ນີ້ປະຊາຊົນມັກຈະພົ້ກັບຫາເລື່ອງຄິບລຶກໄກ່ ຫຼື ເກີດໂລກລະບາດໄດ້ງ່າຍ, ຍ້ອນການເບິ່ງແຍງບໍ່ທົ່ວເຖິງ, ອາຫານບໍ່ພຽງພໍຈະຂາດທຶນ, ສຳລັບປະເພດທີ 3ນີ້ມັກຈະປະສົບຜົນສຳ ເລັດຢ່າງແນ່ນອນ.